# ກ່ຳພ້າຜີນ້ອຍ

ຮຽບຮຽງໂດຍ ດວງເດືອນ ບຸນຍາວົງ
ແຕ້ມຮູບໂດຍ ວົງສະຫວັນ ດຳລົງສຸກ



# ກ່ຳພ້າຜີນ້ອຍ

ຮຽບຮຽງໂດຍ ດວງເດືອນ ບຸນຍາວົງ
ແຕ້ມຮູບໂດຍ ວົງສະຫວັນ ດຳລົງສຸກ

ASSOCIATION FOR SENDING PICTURE BOOKS TO LAO CHILDREN FO JAPAN

ຈັດພິມໂດຍ
ຫໍສະຫມຸດແຫ່ງຊາດ

ອຸປະຖຳໂດຍ

**Canon** CANON INC.

**Publication of this book has been materialized by a donation from Canon Inc., Japan.**

ຮ່ວມກັບ
ສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວ (ASPB) ແຫ່ງຍີ່ປຸ່ນ
1999

# ອ່ານນິທານ ແລ້ວໄດ້ຫຍັງແດ່

ໂຄງການສົ່ງເສີມການອ່ານແຫ່ງຊາດ ທີ່ເລີ່ມຕົ້ນປີ 1990 ຈະສີ້ນສຸດລົງໃນປີ 2003, ແຕ່ການແຈກຢາຍຕູ້ປຶ້ມ, ກົງປຶ້ມ ຫລື ສ້າງຫໍສະໝຸດນ້ອຍໆ ໃຫ້ແກ່ໂຮງຮຽນປະຖົມ ກັບມັດທະຍົມ ສຳເລັດໄປພຽງ 60% ທັງນີ້ ຍ້ອນສາເຫດຫລາຍອັນ ເຊັ່ນ ຈຳນວນໂຮງຮຽນເພີ່ມຂຶ້ນ, ງົບປະມານຈັດຊື້ອຸປະກອນບໍ່ພຽງພໍ, ພະນັກງານມີຈຳກັດ, ການສ້າງປຶ້ມອ່ານທີ່ເໝາະສົມ ກັບເດັກນ້ອຍ ຍັງບໍ່ທັນພຽງພໍ, ການອອກວາລະສານສົ່ງເສີມການອ່ານໂດຍກົງກໍ່ຍັງບໍ່ມີ. ນອກ ຈາກງົບປະມານຂອງລັດແລ້ວຜ່ານມາ ທາງໂຄງການໄດ້ຮັບການສະໜັບສະໜູນຊ່ວຍເຫລືອລ້າ ຈາກອົງການສາກົນ, ສະຖານທູດຕ່າງໆ ໃນ ສ.ປ.ປ.ລາວ, ອົງການພັດທະນາເອກະຊົນ (NGO'S) ທີ່ປະຕິບັດງານຢູ່ລາວ, ເພື່ອນມິດຊາວລາວ ແລະ ຕ່າງດ້າວ ທັງພາຍໃນ ແລະ ຕ່າງປະເທດ.

**ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ ( ASPB )** ເປັນໜຶ່ງໃນບັນດາ ອົງການດັ່ງກ່າວ ທີ່ໃຫ້ການອຸປະຖຳແກ່ໂຄງການສົ່ງເສີມການອ່ານຂອງພວກເຮົາມາເປັນປະຈຳໃນຫລາຍຮູບ ຫລາຍແບບ ເຊັ່ນວ່າ ໃຫ້ງົບປະມານສຳລັບຕູ້ປຶ້ມ, ໃຫ້ທຶນ ແລະ ຈັດຫາຜູ້ ຊ່ຽວຊານມາເຝິກອົບຮົມສຳມະນາໃຫ້ຜູ້ຮັບຜິດຊອບຕູ້ ຫລື ກົງປຶ້ມ, ຫ້ອງຮັກອ່ານ, ລົງແຈກ ຢາຍຕູ້ປຶ້ມ ແລະ ອັນສຳຄັນທີ່ສຸດ ແມ່ນທຶນພິມປຶ້ມ ແລະ ຊື້ປຶ້ມລາວ ແລະ ຕ່າງປະເທດມາໃສ່ຕູ້, ໃຫ້ທຶນຕັ້ງຫ້ອງອ່ານ ພ້ອມອຸປະກອນ ແລະ ອື່ນໆ.

ການຈັດພິມນິທານພື້ນເມືອງຮຽບຮຽງເປັນຄຳທຳມະດາ ເປັນເລື່ອງນຶ່ງທີ່ທາງສະມາ ຄົມໄດ້ສົ່ງເສີມເປັນພິເສດ ນັບແຕ່ການເລືອກເຟັ້ນເລື່ອງ, ການໃຊ້ພາສາທີ່ເໝາະສົມກັບເດັກນ້ອຍ ການສ້າງນັກແຕ້ມ ນັກຂຽນລາວ ໃຫ້ມີຄວາມສາມາດແຕ້ມຮູບ ແລະ ແຕ່ງລະຄອນ ເຈ້ຍ ( ກາມິ ຊິບາຍ). ນັບວ່າເປັນຄວາມພະຍາຍາມ

ທີ່ໜ້າສັນລະເສີນ ແລະ ເປັນປະໂຫຍດ ແກ່ເດັກນັກຮຽນທີ່ສຸດ. ນິທານທີ່ຈັດພິມໃນຊຸດນີ້ ມີເລື່ອງ ***ທ້າວກ່ຳ ພ້າ- ຜີນ້ອຍ, ຂຸນລູ-ນາງອົ້ວ*** ແລະ ***ເວົ້າດີ ມີປະໂຫຍດ*** ລ້ວນແຕ່ເປັນນິ ທານພື້ນເມືອງທີ່ໄດ້ຮັບຄວາມນິຍົມຊົມຊອບມາແລ້ວ ຫລາຍເຊັ່ນຄົນ ແລະ ມາໃນຍຸກນີ້ ກໍ່ໄດ້ຈັດພິມມາແລ້ວຫລາຍເທື່ອ ເຖິງຈະເປັນນິທານແບບອະພິນິທານ ແຕ່ເນື້ອເລື່ອງ ມີສິນທຳ ຄຳສອນ ທີ່ໃຊ້ໄດ້ທຸກຍຸກສະໄໝ ມີລັກສະນະສາກົນ ເພາະສົ່ງເສີມຄວາມກ້າຫານ, ຄວາມເສຍສະລະ, ຄວາມເມດຕາອາລີຕໍ່ກັນ ແລະ ກັນ, ຄວາມ ຮັກອັນຊື່ສັດບໍລິສຸດ, ການໄດ້ອ່ານ ຫລື ໄດ້ຟັງນິທານທີ່ມີເນື້ອໃນດີໆງາມໆ ເລື້ອຍໆ ຈະເຮັດໃຫ້ເດັກນ້ອຍ ມີໃຈງົດງາມໄປນຳ, ມັນຈະຄ່ອຍໆ ຫລໍ່ຫລອມຈິດໃຈເຂົາໃຫ້ໂອບອ້ອມອາລີ ມີສິນທຳ. ການອ່ານປຶ້ມແມ່ນວິທີພັດທະນາແນວຈິດໃຈ ແລະ ແນວທາງການປະພຶດປະຕິບັດ ສ່ວນໃດສ່ວນນຶ່ງ. ເປັນການເປີດຫູເປີດຕາ ໃຫ້ແຈ້ງ ມີທັດສະນະກວ້າງຂວາງອອກ.

ໂຄງການສົ່ງເສີມການອ່ານຂອງພວກເຮົາ ກໍ່ແມ່ນສ່ວນນຶ່ງຂອງວຽກງານການພັດທະ ນາຊັບພະຍາກອນມະນຸດ ທີ່ພັກ ແລະ ລັດຖະບານ ແຫ່ງ ສ.ປ.ປ.ລາວ ໄດ້ຮຽກຮ້ອງໃຫ້ທຸກ ພາກສ່ວນ ສົມທົບໃຫ້ຄວາມຮ່ວມມື. ການປະກອບທຶນຈັດພິມປຶ້ມ ເພື່ອແຈກຢາຍຕາມໂຄງ ການສົ່ງເສີມການອ່ານ ຈຶ່ງແມ່ນສ່ວນປະກອບສຳຄັນອັນນຶ່ງ ຢູ່ໃນວຽກງານນີ້. ຂໍສະແດງ ຄວາມຮູ້ບຸນຄຸນ ແລະ ຊົມເຊີຍຢ່າງຈິງໃຈມາຍັງຄະນະສະມາຄົມ ASPB , ຊາວຍີ່ປຸ່ນ ຜູ້ຫ່ວງໃຍ ຮັກແພງເດັກນ້ອຍລາວດ້ວຍ. ຂໍອຳນວຍອວຍໄຊໃຫ້ບັນດາທ່ານ ມີຄວາມສຸກຄວາມຈະເລີນ ຍິ່ງໆຂຶ້ນໄປດ້ວຍ.

ວຽງຈັນ, ວັນທີ 5 ມີນາ 1999

ກິງເດືອນ ເນດຕະວົງ
ຫົວໜ້າໂຄງການສົ່ງເສີມການອ່ານແຫ່ງຊາດ
ຜູ້ອຳນວຍການຫໍສະໝຸດແຫ່ງຊາດ



ປາງກ່ອນກີ້ ມີທ້າວນ້ອຍຄົນໜຶ່ງ ພໍ່ແມ່ຕາຍປະ, ໄທບ້ານ ໄທເມືອງ ມັກເອີ້ນທ້າວວ່າ "ບັກກໍ່າພ້າ."

ກໍ່າພ້າຢູ່ເຮືອນຕູບ ບໍ່ມີຝາ, ຍາມໜາວມາລາວຕ້ອງນອນຜີງໄຟ.

ແຕ່ລະມື້ ກໍ່າພ້າທ່ຽວຂໍທານ, ບາງມື້ໄດ້ເຂົ້າມາແຕ່ບ້ານເໜືອ ໄດ້ເກືອມາ ແຕ່ບ້ານໃຕ້, ຜູ້ໃຈດີກໍ່ບາຍເອົາຊີ້ນແຫ້ງ ປາຕາຍໃສ່ມືໃຫ້.

ຜູ້ໃຈຮ້າຍ ກໍ່ດ່າໃສ່ໄລ່ໜີ, ຜູ້ຂີ້ດື້ເອົາມິ່ນໝໍ້ທາ ຈົນກໍ່າພ້າໜ້າດໍາ ແລ້ວຫົວຂວັນ.



ລະດູການຜ່ານໄປ ຈາກຫລາຍຝົນ ເປັນຫລາຍໜາວ ກ່ຳພ້າໃຫຍ່ຂຶ້ນສອນບ່າວ. ພໍ່ບ້ານປຶກສາກັບລູກບ້ານວ່າ ຢາກໃຫ້ກ່ຳພ້າ ຮູ້ເຮັດໄຮ່ເຮັດນາ ຫາລ້ຽງຕົນເອງ.

ພໍ່ບ້ານ ບອກກ່ຳພ້າໄປຖາງປ່າ ແລະ ຊ່າວນາຢູ່ແຄມດົງໃຫຍ່ບ່ອນທີ່ບໍ່ມີ ຜູ້ໃດຈັບຈອງ. ບ່ອນນັ້ນ ຊາວລືກັນວ່າ ມີຜີຮ້າຍ.





24/VII
ຫ້າມຈຳໜ່າຍ

ກ່ຳພ້າໄດ້ຈົກ ສຽມ ແລະ ພ້າຂີ້ຫລົ້ມ ທີ່ໄທບ້ານໃຫ້ທານ ແລ້ວອອກໄປຍັງ ແຄມດົງໃຫຍ່ ບ່ອນພໍ່ບ້ານຊີ້ບອກ.

ຊາວບ້ານດີໃຈ ທີ່ກ່ຳພ້າຟັງຄວາມພໍ່ບ້ານ ແລະ ຄິດວ່າ ແຕ່ນີ້ຕໍ່ໄປ ທ້າວຈະ ບໍ່ມາເລາະທ່ຽວຂໍທານອີກ.



# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ